ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ກອງປະຊຸມສົນທະນາວິຊາການ Panel Discussion
# ຫົວຂໍ້: "ການນຳໃຊ້ເງິນສະກຸນທ້ອງຖິ່ນເຂົ້າໃນການຄ້າ ແລະ ການລົງທຶນລະຫວ່າງປະເທດ"



ໃນຕອນບ່າຍຂອງວັນທີ 26 ພຶດສະພາ 2023, ທີ່ໂຮງແຮມຄຣາວ ພລາຊາ. ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມສຳມະນາ ໃນຫົວຂໍ້: **"ການນຳໃຊ້ເງິນສະກຸນທ້ອງຖິ່ນເຂົ້າໃນການຄ້າ ແລະ ການລົງທຶນລະຫວ່າງປະເທດ"** ໄດ້ດຳເນີນໃນຮູບແບບສົນທະນາວິຊາການ **Panel Discussion** ເປັນຄັ້ງທຳອິດຂຶ້ນຢ່າງເປັນທາງການ ໃຫ້ກຽດເປີດພິທີໃນຄັ້ງນີ້ໂດຍ ທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ຊຶ່ງໃຫ້ກຽດເຂົ້າຮ່ວມໂດຍ ທ່ານ HAN Ye ເລຂານຸການໂທ, ສະຖານທູດຈີນປະຈຳລາວ ພ້ອມດ້ວຍຄະນະ, ກະຊວງ, ທະນາຄານ ແລະ ຂະແໜງການກ່ຽວຂ້ອງ. ເຊິ່ງແຂກທີ່ຖືກຮັບເຊີນຢູ່ເທິງເວທີຜູ້ສົນທະນາໃນຄັ້ງນີ້ປະກອບມີຈາກພາກສ່ວນ: ທ່ານ ສຸລິສັກ ທຳນຸວົງ ຫົວໜ້າກົມນະໂຍບາຍເງິນຕາ ທຫລ, ທ່ານ Ruan Jing ຮອງຜູ້ອຳນວຍການທະນາຄານ ICBC,ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທ່ານ ສອນມາລາ ນອນທະສິງ ຫົວໜ້າພະແນກ, ກະຊວງອຸດສະຫະກຳ ແລະ ການຄ້າ, ທ່ານ ປອ. ໄຊບັນດິດ ຣາຊະພົນ ຮອງປະທານສະພາການຄ້າ ແລະ ອຸດສະຫະກຳ ແລະ ທານ ນ. ສຸພາພອນ ສອນນະວົງ ໃຫ້ກຽດເປັນພິທີກອນສຳພາດ.

**ຈຸດປະສົງຂອງການດຳເນີນການຈັດເວທີສົນທະນາວິຊາການ Panel Discussion ໃນຄັ້ງນີ້** ເພື່ອສ້າງຄວາມຮັບຮູ້, ຕື່ນຕົວ ແລະ ລິເລີ່ມໃນການຫັນໄປໃຊ້ສະກຸນເງິນທ້ອງຖິ່ນເຂົ້າໃນການຊຳລະການຄ້າ, ການລົງທຶນຕົວຈິງຂອງພາກທຸລະກິດ. ຊຶ່ງກອງປະຊຸມໃນຄັ້ງນີ້ຖືວ່າເປັນຄັ້ງທຳອິດ ທີ່ທະນາຄານແຫ່ງ ສປປ ລາວ ໄດ້ຈັດເວທີນີ້ຂຶ້ນເປັນທາງການ ນັບແຕ່ມີໜໍ່ແໜງການລິເລີ່ມວຽກສົ່ງເສີມການນຳໃຊ້ສະກຸນເງິນທ້ອງຖິ່ນ ເຂົ້າໃນການຄ້າ ແລະ ການລົງທຶນ ຢູ່ ສປປ ລາວ ແຕ່ຊຸມປີ 2016 ເຖິງ 2019 (ໄລຍະທີ່ ສປປ ລາວ ລິເລີ່ມຫາລືເຈລະຈາ ກັບປະເທດອ້ອມຂ້າງທີ່ມີມູນຄ່າການຄ້າການລົງທຶນສູງເປັນຕົ້ນ ສປ ຈີນ, ສສ ຫວຽດນາມ ແລະ ໄທ). ຊຶ່ງວຽກດັ່ງກ່າວກໍ່ໄດ້ກາຍມາເປັນຮູບປະທຳຂຶ້ນ ໃນເດືອນມັງກອນ ປີ 2020 ໂດຍ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານປະຊາຊົນຈີນ ໄດ້ສຳເລັດການລົງນາມສົ່ງເສີມການນຳໃຊ້ສະກຸນເງິນທ້ອງຖິ່ນເຂົ້າໃນການຊຳລະສະສາງ ໂດຍເປັນການເປີດທາງໃຫ້ ຄູ່ຄ້າ ແລະ ຄູ່ລົງທຶນ ຂອງ 2 ປະເທດ ສາມາດນຳໃຊ້ສະກຸນເງິນທ້ອງຖິ່ນຂອງຕົນເອງຄື: ເງິນກີບ ແລະ ເງິນຢວນ ເຂົ້າໃນການເຮັດທຸລະກຳຊຳລະລະຫວ່າງກັນໄດ້. ໃນສາກົນພາກພື້ນ ແລະ ພາຍໃນສະມາຊິກອາຊຽນ ກໍ່ມີຂະບວນການສົ່ງເສີມການໃຊ້ສະກຸນເງິນທ້ອງຖິ່ນຢ່າງແຜ່ຫຼາຍ ເພື່ອເປັນອຳນວຍຄວາມສະດວກການຄ້າ ແລະ ການລົງທຶນ ແລະ ຫັນໄປສູ່ການໃຊ້ຫຼາຍສະກຸນເງິນ ທີ່ບໍ່ຈຳເປັນຕ້ອງເພິ່ງພາສະກຸນເງິນທີ່ແຂງສະກຸນເງິນໃດໜຶ່ງ. ຊຶ່ງຈະສາມາດສ້າງເງື່ອນໄຂເຮັດໃຫ້ການຄ້າ-ການລົງທຶນ ແລະ ສະກຸນເງິນທີ່ໃຊ້ໃນການຊຳລະສະສາງ ລະຫວ່າງປະເທດມີຄວາມສົມດຸນຍິ່ງຂຶ້ນ. ຊຶ່ງການລົງນາມດັ່ງກ່າວເປັນພຽງການລິເລີ່ມດ້ານນະໂຍບາຍເທົ່ານັ້ນ ຍັງຕ້ອງມີຫຼາຍອົງປະກອບທາງດ້ານພື້ນຖານໂຄງລ່າງເປັນຕົ້ນ: ຄວາມພ້ອມຂອງທະນາຄານທຸລະກິດໃນການເຮັດທຸລະກຳຊຳລະ, ການຮັບຝາກ, ການກຳນົດອັດຕາແລກປ່ຽນໂດຍກົງທີ່ບໍ່ຜ່ານສະກຸນເງິນທີ່ສາມ, ການສ້າງຄວາມເຂົ້າໃຈໃຫ້ແກ່ພາກທຸລະກິດໃນການມີສ່ວນຮ່ວມ ແລະ ອື່ນໆ ເພື່ອກະຕຸກຊຸກຍູ້ວຽກດັ່ງກ່າວໃຫ້ແຂງແຮງຂຶ້ນ. ຄຽງຄູ່ກັນນີ້, ທະນາຄານແຫ່ງ ສປປ ລາວ ຍັງຈະໄດ້ສືບຕໍ່ຄົ້ນຄວ້າຜັກດັນຂອບການຮ່ວມມືດັ່ງກ່າວ ກັບປະເທດຕ່າງໆ ທີ່ມີມູນຄ່າການຄ້າ-ການລົງທຶນທີ່ສູງກັບ ສປປ ລາວ ໃຫ້ກວ້າງຂວາງອອກຕື່ມອີກ ເພື່ອເປັນການຮັດແໜ້ນການຮ່ວມມືທາງດ້ານການເງິນ, ການຫຼຸດຜ່ອນການເອື່ອຍອີງການນຳໃຊ້ສະກຸນເງິນແຂງຂອງສາກົນ ແລະ ທັງເປັນການສົ່ງເສີມສະຖຽນລະພາບຂອງຄ່າເງິນກີບ.






ຜ່ານການສົນທະນາ-ແລກປ່ຽນ ແລະ ນຳສະເໜີ ພາລະບົດບາດມະຫາພາກ ໃນຂະບວນການສົ່ງເສີມການນຳໃຊ້ສະກຸນເງິນທ້ອງຖິ່ນກັບບັນດາປະເທດອ້ອມຂ້າງ; ທ່າອ່ຽງການນຳເຂົ້າ-ສົ່ງອອກ ແລະ ຫັນການນຳໃຊ້ສະກຸນເງິນທ້ອງຖິ່ນ (ຢວນ, ບາດ, ດົງ) ເຂົ້າໃນການຄ້າລະຫວ່າງປະເທດ; ການກະກຽມຄວາມພ້ອມຂອງທະນາຄານທຸລະກິດໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມການນຳໃຊ້ສະກຸນເງິນທ້ອງຖິ່ນ ແລະ ສະພາບຂອງພາກທຸລະກິດ ທີ່ໄດ້ມີຄວາມຮັບຮູ້ ຕື່ນຕົວ ແລະ ໄດ້ລິເລີ່ມ ໃນການຫັນໄປໃຊ້ສະກຸນເງິນທ້ອງຖິ່ນເຂົ້າໃນການຊຳລະສະສາງການຄ້າ-ການລົງທຶນໃນຕົວຈິງ.

ທັງໝົດແມ່ນເພື່ອສ້າງຄວາມຮັບຮູ້, ເຂົ້າໃຈ ແລະ ເປັນເອກະພາບໃນສັງຄົມຕໍ່ວຽກງານການຄຸ້ມຄອງການຊຳລະການຄ້າ ແລະ ການລົງທຶນ ລະຫວ່າງປະເທດ ແລະ ການສົ່ງເສີມການນຳໃຊ້ເງິນກີບໃນການກຳນົດລາຄາສິນຄ້າ ແລະ ບໍລິການ ພາຍໃນ ສປປ ລາວ. ການດຳເນີນການຈັດເວທີສົນທະນາວິຊາການ **Panel Discussion** ຄັ້ງປະຖົມມະເລີກ ໃນຄັ້ງນີ້ ໄດ້ດຳ ເນີນເປັນເວລາເຄິ່ງວັນດ້ວຍຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.




**ຂ່າວ-ພາບ ຈາກ: ສອນໄຊ ສີຫາເທບ ວິຊາການພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ**

## ເສດຖະກິດຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງນຳໃຊ້ເງິນກີບ